LIWG
LAND ISSUES WORKING GROUP

# ກຸ່ມເຄືອຂ່າຍທີ່ດິນ

*ເປັນສ່ວນຫນຶ່ງຂອງເຄືອຂ່າຍໄອເອັນຈີໂອ ແລະ ເຄືອຂ່າຍອົງການຈັດຕັ້ງສາກົນປະຈຳລາວ*

## ເປັນຫຍັງຈຶ່ງມີກຸ່ມເຄືອຂ່າຍທີ່ດິນ?

ສ.ປ.ປ ລາວ ຍັງຄົງອຸດົມຮັ່ງມີໄປດ້ວຍຊັບພະຍາກອນທຳມະຊາດ. ຕະຫຼອດໄລຍະ 10 ປີ ຜ່ານມາ ການລົງທຶນຂອງຕ່າງປະເທດ, ໃນຂະແໜງການອຸດສາຫະກຳບໍ່ແຮ່, ພະລັງງານໄຟຟ້ານ້ຳຕົກ, ແລະ ຂະແໜງການປູກໄມ້ອຸດສາຫະກຳ ໂດຍແມ່ນຄູ່ຮ່ວມງານພາຍໃນເປັນຜູ້ໃຫ້ການສະໜັບສະໜູນ ໄດ້ເຮັດໃຫ້ມີການນຳໃຊ້ຊັບພະຍາກອນເພີ້ມຂື້ນຢ່າງໄວວາ. ສະນັ້ນ, ຈຶ່ງເກີດມີຂໍ້ຂັດແຍ່ງຜົນປະໂຫຍດທາງດ້ານທີ່ດິນ, ນ້ຳ, ແລະ ປ່າໄມ້ ລະຫວ່າງນັກລົງທຶນຕ່າງປະເທດ ກັບຊາວບ້ານຢ່າງຫຼວງຫຼາຍ ທີ່ອາໃສຊັບພະຍາກອນທຳມະຊາດເພື່ອລ້ຽງຊີບ ແລະ ຮັບປະກັນດ້ານສະບຽງອາຫານ.

ການຂຸດຄົ້ນທີ່ດິນ ແລະ ຊັບພະຍາກອນທຳມະຊາດ ເພື່ອສົ່ງເສີມການເຕີບໃຫ່ຍຂະຫຍາຍໂຕທາງດ້ານເສດຖະກິດ ກໍ່ໃຫ້ເກີດມີທ່າແຮງແກ່ຊຸມຊົນທ້ອງຖິ່ນ ໄດ້ປັບປຸງການເຂົ້າເຖິງການບໍລິການ, ການຂະຫຍາຍໂອກາດສ້າງວຽກເຮັດງານທຳໃນທ້ອງຖິ່ນ, ການຂະຫຍາຍກວ້າງ ຕໍ່ການປະຕິບັດວຽກງານດ້ານສິ່ງແວດລ້ອມ, ແລະ ການມີສ່ວນຮ່ວມຢ່າງສະເໝີພາບກັນໃນຂະບວນການພັດທະນາ.

ແຕ່ເຖິງຢ່າງໃດກໍຕາມ, ກໍຍັງມີຄວາມເປັນຫວ່ງຕໍ່ບັນຫາທີ່ດິນ ທີ່ສົ່ງຜົນກະທົບໃສ່ການດຳລົງຊີວິດຂອງຊຸມຊົນ. ການສຳປະທານທີ່ດິນ ກໍ່ເປັນປັດໃຈໜຶ່ງທີ່ໄປຈຳກັດສິດຂອງຊຸມຊົນ ໃນການນຳໃຊ້ທີ່ດິນ ແລະ ປ່າໄມ້. ມັນຍັງມີຄວາມສ່ຽງຕໍ່ການເພີ້ມຂື້ນ ຂອງກະແສການຫຼັ່ງໄຫຼຂອງຊາວໜຸ່ມ ຈາກເຂດຊົນນະບົດເຂົ້າສູ່ຕົວເມືອງ, ເຮັດໃຫ້ເຄື່ອງປ່າຂອງດົງ ແລະ ສັດປ່າຫຼຸດລົງ, ແລະ ການສູນເສຍຕົ້ນທຶນທາງທຳມະຊາດ, ຊັບພະຍາກອນມະນຸດ, ແລະ ເອກະລັກທາງວັດທະນະທຳ ສິ່ງດັ່ງກ່າວນີ້ຈະກໍ່ໃຫ້ເກີດເສດຖະກິດບໍ່ມີຄວາມຍືນຍົງ. ເພື່ອສະກັດກັ້ນບັນຫາດັ່ງກ່າວ, ທຸກພາກສ່ວນຈະຕ້ອງມີການຮ່ວມມືກັນ ແລະ ລົງມືປະຕິບັດຢ່າງຮີບດ່ວນ.

ກຸ່ມເຄືອຂ່າຍທີ່ດິນ ໄດ້ຖືກສ້າງຕັ້ງຂື້ນມາ ໃນປີ 2007 ພາຍໃຕ້ເຄືອຂ່າຍ ຂອງ ໄອ້ເອັນຈີໂອ້, ໃນເບື້ອງຕົ້ນກໍເພື່ອແລກປ່ຽນຂໍ້ມູນກ່ຽວກັບປະເດັນທີ່ດິນ ແລະ ຕໍ່ມາຈຶ່ງໄດ້ເລີ່ມປະຕິບັດກິດຈະກຳແບບສ້າງສັນ ຮ່ວມກັບ ບັນດາເພື່ອນຮ່ວມງານຕ່າງໆ.

ການເຮັດວຽກກ່ຽວກັບການຄຸ້ມຄອງທີ່ດິນ, ປ່າໄມ້ ແລະ ຊັບພະຍາກອນທຳມະຊາດ ຂອງຊຸມຊົນ ໂດຍມີອົງການຈັດຕັ້ງຈາກພາກລັດ, ອົງການຈັດຕັ້ງທາງສັງຄົມ, ຊຸມຊົນ, ຄູ່ຮ່ວມພັດທະນາ ແລະ ພາກສ່ວນອື່ນໆໃຫ້ການຮ່ວມມື.

## ພວກເຮົາແມ່ນໃຜ

ກຸ່ມເຄືອຂ່າຍທີ່ດິນ ມີເປົ້າໝາຍເພື່ອຮັບປະກັນວ່າ ການເຕີບໂຕທາງດ້ານເສດຖະກິດຢ່າງໄວວາ ຂອງ ສ.ປ.ປ ລາວ ແລະ ການລັ່ງໄຫຼ່ເຂົ້າມາລົງທຶນໃນຂະແໜງການທີ່ດິນ ແລະ ຊັບພະຍາກອນທຳມະຊາດນັ້ນ ຈະເຮັດໃຫ້ມີການພັດທະນາທີ່ຍືນຍົງຢ່າງເທົ່າທຽມກັນ.

ກຸ່ມເຄືອຂ່າຍທີ່ດິນ ໂດຍລວມແລ້ວປະກອບມີ ພະນັກງານຂອງອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງທາງສັງຄົມ ແລະ ສ່ວນບຸກຄົນ ທີ່ເຮັດວຽກກ່ຽວກັບປະເດັນທີ່ດິນ ຢູ່ໃນ ສ.ປ.ປ ລາວ. ກຸ່ມດັ່ງກ່າວລວມມີຕົວແທນຈາກ 40 ອົງການຈັດຕັ້ງ.

ກຸ່ມເຄືອຂ່າຍທີ່ດິນ ໄດ້ປະຕິບັດກິດຈະກຳໂດຍມີ ກອງເລຂາເປັນຜູ້ປະສານງານ ແລະ ມີຄະນະປະທານເປັນຜູ້ຊີ້ນຳ. ບັນດາຄະນະປະທານເຫຼົ່ານີ້ ແມ່ນໄດ້ຖືກຄັດເລືອກເອົາມາຈາກອົງການຈັດຕັ້ງສະມາຊິກຕ່າງໆ.

LIWG
LAND ISSUES WORKING GROUP

# ກຸ່ມເຄືອຂ່າຍທີ່ດິນ

*ເປັນສ່ວນໜຶ່ງຂອງເຄືອຂ່າຍໄອເອັນຈີໂອ ແລະ ເຄືອຂ່າຍອົງການຈັດຕັ້ງສາກົນປະຈຳລາວ*

## ສິ່ງທີ່ພວກເຮົາເຮັດ

ກຸ່ມເປົ້າໝາຍຫລັກຂອງກິດຈະກຳ ແມ່ນພາກປະຊາສັງຄົມ, ພາກລັດຖະບານ, ຄູ່ຮ່ວມພັດທະນາ ແລະ ພາກເອກະຊົນ ໂດຍມີ 4 ຈຸດປະສົງຫລັກ ດັ່ງຕໍ່ໄປນີ້:

1: **ຍົກສູງຄວາມຮູ້, ຝຶກອົບຮົມ, ແລະ ເສີມສ້າງຄວາມສາມາດ**

ໃຫ້ການສະໜັບສະໜູນແກ່ພາກປະຊາສັງຄົມ, ຄູ່ຮ່ວມພັດທະນາ ແລະ ພາກເອກະຊົນ ເພື່ອໃຫ້ເຂົາເຈົ້າສາມາດເສີມສ້າງຄວາມເປັນເຈົ້າການຂອງຊຸມຊົນ ໃຫ້ມີຄວາມສະເໝີພາບກັນທາງດ້ານບົດບາດຍິງ-ຊາຍ, ການຄຸ້ມຄອງນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດ.

2: **ສ້າງເຄືອຂ່າຍ ແລະ ການສົ່ງເສີມການປຶກສາຫາລື**

ສົ່ງເສີມການປະສານງານ ແລະ ການຮ່ວມມື ຈາກພາກສ່ວນຕ່າງໆທັງພາຍໃນ ແລະ ຕ່າງປະເທດ ເພື່ອເພີ່ມທະວີການປຶກສາຫາລື ແລະ ເສີມສ້າງກິດຈະກຳແລກປ່ຽນຂໍ້ມູນຂ່າວສານ.

3: **ສະໜັບສະໜູນນະໂຍບາຍລັດຖະບານ**

ນິຕິກຳ ແລະ ນະໂຍບາຍ ຂອງລັດຖະບານ ກ່ຽວກັບທີ່ດິນ ແມ່ນເພື່ອປົກປ້ອງຜົນປະໂຫຍດຂອງປະຊາຊົນລາວ ແລະ ເພີ້ມທະວີການຄຸ້ມຄອງທີ່ດິນ, ປ່າໄມ້ ແລະ ຊັບພະຍາກອນທຳມະຊາດຂອງຊມຸຊົນ.

4: **ການຄົ້ນຄ້ວາ ແລະ ການສ້າງເປັນເອກະສານ**

ເກັບກຳຂໍ້ມູນສະເພາະປະເດັນທີ່ດິນໃຫ້ຫຼາຍຂຶ້ນ ເພື່ອເສີມສ້າງ-ສົ່ງເສີມ ກິດຈະກຳຂອງພວກເຮົາ.

## ຜົນງານທີ່ຜ່ານມາ

ນັບແຕ່ໄດ້ມີການສ້າງຕັ້ງ ໃນປີ 2007, ກຸ່ມເຄືອຂ່າຍທີ່ດິນ ໄດ້ປະກອບສ່ວນເຂົ້າໃນວຽກງານທີ່ດິນ ຮວບຮ່ວມຂໍ້ຄິດເຫັນ ຈາກພາກປະຊາຄົມ ເພື່ອປັບປຸງການຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນທຳມະຊາດ ໃນ ສ.ປ.ປ ລາວ.

ໃນເດືອນ ມີນາ ປີ 2013, ກຸ່ມເຄືອຂ່າຍທີ່ດິນ ໃນນາມເປັນຕົວແທນໃຫ້ແກ່ ອົງການຈັດຕັ້ງສະມາຊິກ ໄດ້ຖືກແຕ່ງຕັ້ງໃຫ້ເປັນປະທານຮ່ວມ ຂອງກຸ່ມຂະແໜງການທີ່ເຮັດວຽກກ່ຽວກັບທີ່ດິນ (LSSWG) ທີ່ຖືກສ້າງຕັ້ງຂຶ້ນພາຍໃຕ້ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.


**ຕິດຕໍ່ສອບຖາມຂໍ້ມູນໄດ້ນຳ**
**ກອງເລຂາ ກຸ່ມເຄືອຂ່າຍທີ່ດິນ**

✉ info@laolandissues.org
☎ +856 030 981 5657
www.laolandissues.org
ນະຄອນຫຼວງວຽງຈັນ, ສ.ປ.ປ ລາວ


